## ເອກະສານຊ້ອນທ້າຍ 3: ພາບລວມ ຂອງດັດຊະນີຄະແນນຄຸນນະພາບການລົງທຶນ (IQI)

| ຕົວຊີ້ວັດ | LCI | QI | ຄະແນນ | ຄະແນນສູງສຸດ |
|---|---|---|---|---|
| **1. ຄວາມສອດຄ່ອງກັບລະບຽບກົດໝາຍ** | | | | **25** |
| 1.1 ການສຳຫຼວດພື້ນທີ່ ແລະ ການອະນຸມັດ | | x | | 3.57 |
| *1.1a ບໍລິສັດໄດ້ບຸກເບີກທີ່ດິນ ພາຍຫຼັງ ການເຊັນສັນຍາການລົງທຶນ/ສັນຍາສຳປະທານ ແລະ ໄດ້ສຳເລັດການສຳຫຼວດພື້ນທີ່ດິນ ພ້ອມທັງສ້າງແຜນທີ່ຂອງພື້ນທີ່ຈະມີການສຳປະທານ* | | | 3.57 | |
| *1.1b ບໍລິສັດໄດ້ບຸກເບີກທີ່ດິນ ພາຍຫຼັງ ການເຊັນສັນຍາການລົງທຶນ/ສັນຍາສຳປະທານ, ແຕ່ ໄດ້ບຸກເບີກພື້ນທີ່ກ່ອນການສຳຫຼວດທີ່ດິນສຳເລັດ ແລະ ບໍ່ໄດ້ສ້າງແຜນທີ່ຂອງພື້ນທີ່ຈະມີການ ສຳປະທານ ຫຼື ໄດ້ມີການສ້າງແຜນທີ່ຂອງເນື້ອທີ່ຈະມີການສຳປະທານ* | | | 1.79 | |
| *1.1c ບໍລິສັດໄດ້ບຸກເບີກທີ່ດິນ ກ່ອນ ການເຊັນສັນຍາການລົງທຶນ/ສັນຍາສຳປະທານ ແລະ ການສຳຫຼວດທີ່ດິນສຳເລັດ ແລະ ບໍ່ໄດ້ສ້າງແຜນທີ່ຂອງພື້ນທີ່ຈະມີການສຳປະທານ ຫຼື ບໍ່ມີໃຜ ຮູ້ກ່ຽວກັບບັນດາຂັ້ນຕອນເຫຼົ່ານີ້* | | | 0 | |
| 1.2 ນຳໃຊ້ທີ່ດິນຕາມຂອບເຂດອະນຸມັດ | x | x | | 3.57 |
| *1.2a ບໍລິສັດໄດ້ນຳໃຊ້ທີ່ດິນຢູ່ສະເພາະຂອບເຂດທີ່ອະນຸມັດ ແລະ ບໍ່ມີຫຼັກຖານອ້າງອີງຈາກ ຖານຂໍ້ມູນເຊົ່າ ແລະ ສຳປະທານທີ່ດິນ ວ່າ ເນື້ອທີ່ພັດທະນາແລ້ວ ຢູ່ນອກຂອບເຂດສຳປະທານ ຕາມຂອບເຂດເນື້ອທີ່ ທີ່ໄດ້ຈັດສັນໃຫ້.* | | | 3.57 | |
| *1.2b ບໍລິສັດນຳໃຊ້ທີ່ດິນເກີນຂອບເຂດສຳປະທານ 10 ເຮັກຕາ ຫຼື ໜ້ອຍກວ່າ* | | | 1.79 | |
| *1.2c ບໍລິສັດນຳໃຊ້ທີ່ດິນເກີນຂອບເຂດສຳປະທານ ຫຼາຍກວ່າ 10 ເຮັກຕາ* | | | 0 | |
| 1.3 ປະຕິບັດສັນຍາເຊົ່າ ແລະ ສຳປະທານ | | x | | 3.57 |
| *1.3a ບໍລິສັດບໍ່ເຄີຍລະເມີດເນື້ອໃນຂອງສັນຍາການລົງທຶນ/ສັນຍາສຳປະທານ ແລະ ລະບຽບການ ອື່ນໆທີ່ກ່ຽວຂ້ອງຂອງ ສປປ ລາວ* | | | 3.57 | |
| *1.3b ບໍລິສັດໄດ້ລະເມີດເນື້ອໃນຂອງສັນຍາການລົງທຶນ/ສັນຍາສຳປະທານ ແລະ ລະບຽບການ ອື່ນໆທີ່ກ່ຽວຂ້ອງຂອງ ສປປ ລາວ ຢ່າງໜ້ອຍໜຶ່ງຂໍ້ ແຕ່ເປັນການລະເມີດທີ່ອີງການຈັດຕັ້ງລັດເຫັນ ວ່າ ຢູ່ໃນຂັ້ນເລັກໜ້ອຍ ຫຼື ເປັນການລະເມີດທີ່ບໍ່ຮ້າຍແຮງ ແລະ ບໍ່ສົ່ງຜົນກະທົບໃຫ້ແກ່ປະຊາຊົນ* | | | 1.79 | |
| *1.3c ບໍລິສັດໄດ້ລະເມີດເນື້ອໃນຂອງສັນຍາການລົງທຶນ/ສັນຍາສຳປະທານ ແລະ ລະບຽບການ ອື່ນໆ ທີ່ກ່ຽວຂ້ອງຂອງ ສປປ ລາວ ຢ່າງໜ້ອຍໜຶ່ງຂໍ້ ທີ່ອີງການຈັດຕັ້ງລັດເຫັນວ່າ ເປັນການ ລະເມີດຢ່າງຮ້າຍແຮງ ແລະ ສົ່ງຜົນກະທົບໃຫ້ແກ່ປະຊາຊົນ* | | | 0 | |
| 1.4 ການປຶກສາຫາລືກັບຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ | | | | 3.57 |
| 1.4.1 ປະເພດຂອງການປຶກສາຫາລື | | x | | 1.79 |
| *1.4.1a ຊາວບ້ານໄດ້ຮັບການແຈ້ງ ກ່ຽວກັບ ການພັດທະນາໂຄງການ ໂດຍໄດ້ຮັບຂໍ້ມູນທີ່ພຽງພໍ ແລະ ຊາວບ້ານ ສາມາດເຈລະຈາຕໍ່ລອງໃນ 4 ບັນຫາ ເຊັ່ນ: ຂະໜາດຂອງໂຄງການ, ປະເພດຂອງ ທີ່ດິນ, ມູນຄ່າຂອງການຊົດເຊີຍ ຕໍ່ກັບທີ່ດິນທີ່ສູນເສຍ ແລະ ຜົນປະໂຫຍດອື່ນໆ* | | | 1.79 | |
| *1.4.1b ຊາວບ້ານໄດ້ຮັບການແຈ້ງການກ່ຽວກັບການພັດທະນາໂຄງການໂດຍໄດ້ຮັບຂໍ້ມູນທີ່ ພຽງພໍ ແລະ ຊາວບ້ານ ສາມາດເຈລະຈາຕໍ່ລອງ 3 ໃນ 4 ບັນຫາ ເຊັ່ນ: ຂະໜາດຂອງໂຄງການ, ປະເພດຂອງ ທີ່ດິນ, ມູນຄ່າຂອງການຊົດເຊີຍ ຕໍ່ກັບທີ່ດິນທີ່ສູນເສຍ ແລະ ຜົນປະໂຫຍດອື່ນໆ* | | | 1.43 | |
| *1.4.1c ຊາວບ້ານໄດ້ຮັບການແຈ້ງການກ່ຽວກັບການພັດທະນາໂຄງການໂດຍໄດ້ຮັບຂໍ້ມູນທີ່ພຽງພໍ ແລະ ຊາວບ້ານ ສາມາດເຈລະຈາຕໍ່ລອງ 2 ໃນ 4 ບັນຫາ ເຊັ່ນ: ຂະໜາດຂອງໂຄງການ, ປະເພດຂອງ ທີ່ດິນ, ມູນຄ່າຂອງການຊົດເຊີຍ ຕໍ່ກັບທີ່ດິນທີ່ສູນເສຍ ແລະ ຜົນປະໂຫຍດອື່ນໆ* | | | 1.07 | |
| *1.4.1d ຊາວບ້ານໄດ້ຮັບການແຈ້ງການກ່ຽວກັບການພັດທະນາໂຄງການໂດຍໄດ້ຮັບຂໍ້ມູນທີ່ພຽງພໍ ແລະ ຊາວບ້ານ ສາມາດເຈລະຈາຕໍ່ລອງ 1 ໃນ 4 ບັນຫາ ເຊັ່ນ: ຂະໜາດຂອງໂຄງການ, ປະເພດຂອງ ທີ່ດິນ, ມູນຄ່າຂອງການຊົດເຊີຍ ຕໍ່ກັບທີ່ດິນທີ່ສູນເສຍ ແລະ ຜົນປະໂຫຍດອື່ນໆ* | | | 0.71 | |

| ຕົວຊີ້ວັດ | LCI | QI | ຄະແນນ | ຄະແນນສູງສຸດ |
|---|---|---|---|---|
| *1.4.1e ຊາວບ້ານໄດ້ຮັບການແຈ້ງການກ່ຽວກັບການພັດທະນາໂຄງການໂດຍໄດ້ຮັບຂໍ້ມູນທີ່ພຽງພໍ, ແຕ່ ຊາວບ້ານບໍ່ສາມາດເຈລະຈາຕໍ່ລອງບັນຫາໃດໆ ໃນ 4 ບັນຫາ ເຊັ່ນ: ຂະໜາດຂອງໂຄງການ, ປະເພດຂອງທີ່ດິນ, ມູນຄ່າຂອງການຊົດເຊີຍ ຕໍ່ກັບທີ່ດິນທີ່ສູນເສຍ ແລະ ຜົນປະໂຫຍດອື່ນໆ* | | | 0.36 | |
| *1.4.1f ຊາວບ້ານບໍ່ໄດ້ຮັບການແຈ້ງການກ່ຽວກັບການພັດທະນາໂຄງການໂດຍໄດ້ຮັບຂໍ້ມູນທີ່ພຽງພໍ ແລະ ຊາວບ້ານບໍ່ສາມາດເຈລະຈາຕໍ່ລອງ ກັບ ໂຄງການເຊົ່າ ແລະ ສຳປະທານທີ່ດິນ (ກ່ຽວກັບຂະໜາດຂອງໂຄງການ, ປະເພດຂອງທີ່ດິນ, ມູນຄ່າຂອງການຊົດເຊີຍຕໍ່ກັບທີ່ດິນທີ່ສູນເສຍ ແລະ ຜົນປະໂຫຍດອື່ນໆ) ເລີຍ* | | | 0 | |
| 1.4.2 ລະດັບການມີສ່ວນຮ່ວມຂອງບ້ານ | | x | | 1.79 |
| *1.4.2a ໄດ້ມີການປຶກສາຫາລືກັບບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ນາຍບ້ານ, ອຳນາດການປົກຄອງບ້ານ ແລະ ຊາວບ້ານທັງໝົດ ໄດ້ມີສ່ວນຮ່ວມໃນຂະບວນການປຶກສາຫາລື* | | | 1.79 | |
| *1.4.2b ໄດ້ມີການປຶກສາຫາລືກັບບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ແຕ່ມີພຽງ ນາຍບ້ານ ແລະ ອຳນາດການປົກຄອງບ້ານ ທີ່ໄດ້ມີສ່ວນຮ່ວມໃນຂະບວນການປຶກສາຫາລື* | | | 1.19 | |
| *1.4.2c ໄດ້ມີການປຶກສາຫາລືກັບບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ, ແຕ່ມີພຽງ ນາຍບ້ານທີ່ໄດ້ມີສ່ວນຮ່ວມໃນຂະບວນການປຶກສາຫາລື* | | | 0.60 | |
| *1.4.2d ບໍ່ມີການປຶກສາຫາລືກັບບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ບໍ່ມີໃຜຢູ່ພາຍໃນບ້ານທີ່ມີສ່ວນຮ່ວມໃນຂະບວນການປຶກສາຫາລື* | | | 0 | |
| 1.5 ການອະນຸຍາດ-ເຫັນດີເຫັນພ້ອມ ຈາກຊາວບ້ານ ແລະ ກົນໄກການຮ້ອງທຸກ | | | | 3.57 |
| 1.5.1 ການອະນຸຍາດ-ເຫັນດີເຫັນພ້ອມ ຈາກຊາວບ້ານ | | x | | 1.79 |
| *1.5.1a ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ມີສິດຢ່າງເຕັມທີ່ໃນການເຫັນດີ ຫຼື ປະຕິເສດທີ່ຈະອະນຸຍາດທີ່ດິນຂອງເຂົາເຈົ້າ ໃຫ້ແກ່ ໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ.* | | | 1.79 | |
| *1.5.1b ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ໄດ້ເຫັນດີເຫັນພ້ອມ ຕໍ່ກັບທີ່ດິນ ທີ່ຈະອະນຸມັດໃຫ້ແກ່ໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ ແຕ່ ພວກເຂົາບໍ່ຮູ້ສຶກວ່າ ມີສິດທີ່ຈະປະຕິເສດໂຄງການດັ່ງກ່າວ.* | | | 0.89 | |
| *1.5.1c ຊາວບ້ານບໍ່ເຫັນດີເຫັນພ້ອມ ຫຼື ນັກລົງທຶນ ບໍ່ໄດ້ຂໍອະນຸຍາດ ຈາກຊາວບ້ານ ເລີຍ ຫຼື ບໍ່ມີໃຜຢູ່ໃນບ້ານຮູ້ຂໍ້ມູນກ່ຽວກັບການຂໍອະນຸຍາດ ດັ່ງກ່າວ.* | | | 0 | |
| 1.5.2 ກົນໄກການຮ້ອງທຸກ | | x | | 1.79 |
| *1.5.2a ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ສາມາດຍື່ນສະເໜີຄຳຮ້ອງທຸກ ຕໍ່ກັບບໍລິສັດ ແລະ ບັນຫາດັ່ງກ່າວ ໄດ້ຮັບການແກ້ໄຂຢ່າງມີປະສິດທິຜົນ ຫຼື ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ບໍ່ມີບັນຫາ ທີ່ຈະຍື່ນຮ້ອງທຸກ ຕໍ່ກັບບໍລິສັດ.* | | | 1.79 | |
| *1.5.2b ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ສາມາດຍື່ນສະເໜີຄຳຮ້ອງທຸກ ຕໍ່ກັບບໍລິສັດ ແລະ ບັນຫາດັ່ງກ່າວ ບໍ່ໄດ້ຮັບການແກ້ໄຂຢ່າງມີປະສິດທິຜົນ.* | | | 1.19 | |
| *1.5.2c ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ສາມາດຍື່ນສະເໜີຄຳຮ້ອງທຸກ ຕໍ່ກັບບໍລິສັດ ແຕ່ບັນຫາດັ່ງກ່າວບໍ່ໄດ້ຮັບການແກ້ໄຂເລີຍ.* | | | 0.60 | |
| *1.5.2d ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ຮູ້ສຶກວ່າ ພວກເຂົາບໍ່ ສາມາດຍື່ນສະເໜີຄຳຮ້ອງທຸກຕໍ່ກັບບໍລິສັດເລີຍ.* | | | 0 | |
| 1.6 ຄວາມຄືບໜ້າຂອງໂຄງການ | | x | | 3.57 |
| *1.6a ການພັດທະນາໂຄງການມີຄວາມຄືບໜ້າເປັນຢ່າງດີ ເຊັ່ນ: ການຈັດຕັ້ງປະຕິບັດໂຄງການເປັນໄປຕາມແຜນ ຫຼື ມີຄວາມຄືບໜ້າ ລື່ນແຜນການທີ່ວາງໄວ້ ແລະ ມີຜົນໄດ້ຮັບທີ່ດີ* | | | 3.57 | |
| *1.6b ການພັດທະນາໂຄງການມີຄວາມຄືບໜ້າໃນລະດັບປານກາງ* | | | 2.38 | |
| *1.6c ການພັດທະນາໂຄງການ ບໍ່ມີຄວາມຄືບໜ້າປານໃດ ເຊັ່ນ: ການຈັດຕັ້ງປະຕິບັດໂຄງການຊ້າກວ່າແຜນການ ແລະ ບໍ່ໄດ້ຮັບຜົນດີ* | | | 1.19 | |
| *1.6d ການພັດທະນາໂຄງການ ບໍ່ມີຄວາມຄືບໜ້າ ເລີຍ ເຊັ່ນ: ໂຄງການມີລັກສະນະປະລະ/ບໍ່ເອົາໃຈໃສ່ໃນການຈັດຕັ້ງປະຕິບັດໂຄງການ ແລະ ບໍ່ມີຜົນໄດ້ຮັບ ຫຼື ບໍ່ມີຄວາມຄືບໜ້າເລີຍ* | | | 0 | |

| ຕົວຊີ້ວັດ | LCI | QI | ຄະແນນ | ຄະແນນສູງສຸດ |
|---|---|---|---|---|
| 1.7 ການລາຍງານຄວາມຄືບໜ້າຂອງໂຄງການ | | x | | 3.57 |
| *1.7a ມີການລາຍງານຄວາມຄືບໜ້າຂອງໂຄງການຢ່າງເປັນປົກກະຕິ ເຊັ່ນ: ຢ່າງໜ້ອຍ 1 ຄັ້ງ ຕໍ່ ປີ* | | | 3.57 | |
| *1.7b ມີການລາຍງານຄວາມຄືບໜ້າຂອງໂຄງການ ແຕ່ບໍ່ເປັນປົກກະຕິ ເຊັ່ນ: ມີການລາຍງານໜ້ອຍກວ່າ 1 ຄັ້ງ ຕໍ່ ປີ* | | | 1.79 | |
| *1.7c ບໍ່ມີການລາຍງານຄວາມຄືບໜ້າຂອງໂຄງການເລີຍ* | | | 0 | |
| **2. ຜົນກະທົບດ້ານສິ່ງແວດລ້ອມ** | | | | **25** |
| 2.1 ປະເພດປ່າທີ່ຖືກບຸກເບີກ | x | x | | 4.17 |
| *2.1a ໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ ບໍ່ໄດ້ບຸກເບີກເນື້ອທີ່ ທີ່ນອນຢູ່ໃນເຂດ 3 ປະເພດ ປ່າໄມ້ ຂອງລັດປະກອບມີ ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ* | | | 4.17 | |
| *2.1b ໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ ໄດ້ບຸກເບີກເນື້ອທີ່ດິນຢູ່ໃນຂອບເຂດ 3 ປະເພດປ່າໄມ້ ຂອງລັດໃດໜຶ່ງ ປະກອບມີ ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ* | | | 0 | |
| 2.2: ການປະເມີນຜົນກະທົບດ້ານສິ່ງແວດລ້ອມ | | x | | 4.17 |
| *2.2a ການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ (ESIA) ຫຼື ການປະເມີນຜົນກະທົບດ້ານສິ່ງແວດລ້ອມເບື້ອງຕົ້ນ (IEE) ໄດ້ດໍາເນີນ ກ່ອນ ການເລີ່ມຕົ້ນພັດທະນາໂຄງການ* | | | 4.17 | |
| *2.2b ESIA ຫຼື IEE ໄດ້ດໍາເນີນພາຍຫຼັງ ການພັດທະນາໂຄງການແລ້ວ* | | | 2.08 | |
| *2.2c ບໍ່ມີການປະເມີນ ESIA ຫຼື IEE ເລີຍ* | | | 0 | |
| 2.3: ການລາຍງານ ການຕິດຕາມບັນຫາສິ່ງແວດລ້ອມ | | x | | 4.17 |
| *2.3a ໄດ້ມີການລາຍງານ ກ່ຽວກັບ ບັນຫາສິ່ງແວດລ້ອມ ຢ່າງເປັນປົກກະຕິ (ເຊັ່ນ: ຢ່າງໜ້ອຍໄດ້ລາຍງານ ປະຈໍາປີ) ຕາມຂໍ້ກໍານົດຂອງລະບຽບກົດໝາຍ ລວມທັງ ມີການສ້າງ ແຜນຄຸ້ມຄອງ ແລະ ຕິດຕາມກວດກາດ້ານສິ່ງແວດລ້ອມ (EMMP)* | | | 4.17 | |
| *2.3b ບໍລິສັດໄດ້ລາຍງານ ກ່ຽວກັບ ບັນຫາສິ່ງແວດລ້ອມ ແຕ່ບໍ່ເປັນປົກກະຕິ ຫຼື ບໍ່ປະຕິບັດຕາມລະບຽບການກໍານົດຢ່າງເຂັ້ມງວດ ເຊັ່ນ: ບໍ່ມີ EMMP* | | | 2.08 | |
| *2.3c ບໍລິສັດ ບໍ່ໄດ້ລາຍງານກ່ຽວກັບບັນຫາສິ່ງແວດລ້ອມເລີຍ* | | | 0 | |
| 2.4 ການນໍາໃຊ້ ແລະ ການຄຸ້ມຄອງສານເຄມີ | | | | 4.17 |
| 2.4.1 ການອະນຸຍາດນໍາໃຊ້ສານເຄມີ | | x | | 2.08 |
| *2.4.1a ສານເຄມີທີ່ໄດ້ນໍາໃຊ້ທຸກປະເພດ ໄດ້ຮັບອະນຸຍາດ ໃຫ້ນໍາໃຊ້ ຈາກຂະແໜງການທີ່ກ່ຽວຂ້ອງຂອງລັດ ຫຼື ບໍລິສັດ ບໍ່ໄດ້ນໍາໃຊ້ສານເຄມີໃດໆເລີຍ ເຂົ້າໃນການຈັດຕັ້ງປະຕິບັດໂຄງການ.* | | | 2.08 | |
| *2.4.1b ສານເຄມີສ່ວນໃຫຍ່ ໄດ້ຮັບອະນຸຍາດໃຫ້ນໍາໃຊ້ຈາກຂະແໜງການທີ່ກ່ຽວຂ້ອງຂອງລັດ, ແຕ່ບໍ່ແມ່ນ ທຸກປະເພດ* | | | 1.04 | |
| *2.4.1c ມີແຕ່ບາງປະເພດ ເທົ່ານັ້ນ ທີ່ໄດ້ຮັບອະນຸຍາດໃຫ້ນໍາໃຊ້ ຈາກຂະແໜງການທີ່ກ່ຽວຂ້ອງຂອງລັດ ຫຼື ບໍ່ໄດ້ຮັບອະນຸຍາດໃຫ້ນໍາໃຊ້ ຈາກຂະແໜງການທີ່ກ່ຽວຂ້ອງຂອງລັດເລີຍ* | | | 0 | |
| 2.4.2 ຜົນກະທົບຈາກການນໍາໃຊ້ສານເຄມີ | | x | | 2.08 |
| *2.4.2a ບໍ່ມີການລາຍງານ ກ່ຽວກັບ ຜົນກະທົບດ້ານລົບຈາກການນໍາໃຊ້ສານເຄມີ ຢູ່ບໍລິເວນໃກ້ຄຽງ ຫຼື ບໍ່ມີການນໍາໃຊ້ສານເຄມີໃດໆເລີຍ ເຂົ້າໃນການຈັດຕັ້ງປະຕິບັດໂຄງການ.* | | | 2.08 | |
| *2.4.2b ມີການລາຍງານ ກ່ຽວກັບ ຜົນກະທົບດ້ານລົບຈາກການນໍາໃຊ້ສານເຄມີເຂົ້າໃນການຈັດຕັ້ງປະຕິບັດໂຄງການ ຢູ່ບໍລິເວນໃກ້ຄຽງໃນລະດັບໃດໜຶ່ງ* | | | 1.04 | |
| *2.4.2c ມີການລາຍງານ ກ່ຽວກັບ ຜົນກະທົບດ້ານລົບຂັ້ນຮ້າຍແຮງຈາກການນໍາໃຊ້ສານເຄມີເຂົ້າໃນການຈັດຕັ້ງປະຕິບັດໂຄງການ ຢູ່ບໍລິເວນໃກ້ຄຽງ* | | | 0 | |
| 2.5 ມົນລະພິດ | | | | 4.17 |
| 2.5.1 ມົນລະພິດ | | x | | 4.17 |

| ຕົວຊີ້ວັດ | LCI | QI | ຄະແນນ | ຄະແນນ ສູງສຸດ |
|---|---|---|---|---|
| *2.5.1a ໂຄງການ ກໍ່ໃຫ້ເກີດມົນລະພິດທາງອາກາດ, ນ້ຳ, ດິນ ແລະ ສຽງ ໃນລະດັບທີ່ໜ້ອຍຫຼາຍ ຫຼື ໂຄງການມີມາດຕະການປ້ອງກັນ ແລະ ແກ້ໄຂບັນຫາມົນລະພິດທີ່ເກີດຈາກການຈັດຕັ້ງປະຕິບັດໂຄງການໄດ້ຢ່າງມີປະສິດທິຜົນ* | | | 4.17 | |
| *2.5.1b ໂຄງການ ກໍ່ໃຫ້ເກີດມົນລະພິດທາງອາກາດ, ນ້ຳ, ດິນ ແລະ ສຽງ ໃນລະດັບໃດໜຶ່ງ ຫຼື ໂຄງການ ມີມາດຕະການປ້ອງກັນ ແລະ ແກ້ໄຂບັນຫາມົນລະພິດທີ່ເກີດຈາກການຈັດຕັ້ງປະຕິບັດໂຄງການໄດ້ໃນລະດັບໃດໜຶ່ງ* | | | 2.08 | |
| *2.5.1c ໂຄງການ ກໍ່ໃຫ້ເກີດມົນລະພິດທາງອາກາດ, ນ້ຳ, ດິນ ແລະ ສຽງ ໃນລະດັບທີ່ຮ້າຍແຮງ ແລະ ສິ່ງຜົນກະທົບ ໃຫ້ແກ່ ກະສິກຳ, ສຸຂະພາບ, ນ້ຳດື່ມ ແລະ ບໍລິສັດ ມີມາດຕະການແກ້ໄຂບັນຫາຜົນກະທົບດັ່ງກ່າວ ໄດ້ໃນລະດັບທີ່ຕ່ຳ ຫຼື ບໍ່ມີຄວາມພະຍາຍາມເທົ່າທີ່ຄວນໃນການແກ້ໄຂບັນຫາດັ່ງກ່າວ* | | | 0 | |
| 2.6. ຜົນກະທົບຕໍ່ສັດລ້ຽງ | | x | | 4.17 |
| *2.6a ຈຳນວນສັດລ້ຽງ ຢູ່ບ້ານທີ່ໄດ້ຮັບຜົນກະທົບ ຍັງສໍ່າເກົ່າ ຫຼື ເພີ່ມຂຶ້ນ ນັບຕັ້ງແຕ່ມີໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ ຢູ່ໃນບ້ານ ຫຼື ຈຳນວນຂອງສັດລ້ຽງ ຫຼຸດລົງ ແຕ່ບໍ່ກ່ຽວຂ້ອງກັບໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ* | | | 4.17 | |
| *2.6b ຈຳນວນຂອງສັດລ້ຽງ ໄດ້ຫຼຸດລົງໜ້ອຍໜຶ່ງ ຍ້ອນສາເຫດມາຈາກໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ* | | | 2.08 | |
| *2.6c ຈຳນວນຂອງສັດລ້ຽງ ໄດ້ຫຼຸດລົງຫຼາຍ ຍ້ອນສາເຫດມາຈາກໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ* | | | 0 | |
| **3. ຜົນກະທົບ ດ້ານເສດຖະກິດ** | | | | **25** |
| 3.1 ຈຳນວນຄົວເຮືອນ ທີ່ສູນເສຍທີ່ດິນໃຫ້ແກ່ໂຄງການ | | | | 3.13 |
| 3.1.1 ຈຳນວນຄອບຄົວ ທີ່ສູນເສຍທີ່ດິນໃຫ້ແກ່ໂຄງການ | | x | | 1.56 |
| *3.1.1a ບໍ່ມີຄົວເຮືອນທີ່ສູນເສຍທີ່ດິນໃຫ້ແກ່ ໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ* | | | 1.56 | |
| *3.1.1b ຈຳນວນຄົວເຮືອນທີ່ສູນເສຍທີ່ດິນໃຫ້ແກ່ ໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ ມີໜ້ອຍກວ່າ 50% ຂອງຈຳນວນຄົວເຮືອນ ຢູ່ພາຍໃນບ້ານ ທັງໝົດ.* | | | 1.04 | |
| *3.1.1c ຈຳນວນຄົວເຮືອນທີ່ສູນເສຍທີ່ດິນໃຫ້ແກ່ ໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ ມີຫຼາຍກວ່າ 50% ຂອງຈຳນວນຄົວເຮືອນ ຢູ່ພາຍໃນບ້ານ ທັງໝົດ.* | | | 0.52 | |
| *3.1.1d ທຸກຄົວເຮືອນທີ່ຢູ່ພາຍໃນບ້ານ ສູນເສຍທີ່ດິນຂອງຕົນສ່ວນໃດໜຶ່ງໃຫ້ແກ່ ໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ.* | | | 0 | |
| 3.1.2 ເນື້ອທີ່ດິນ ທີ່ສູນເສຍໃຫ້ແກ່ໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ ໂດຍສະເລ່ຍ ຕໍ່ຄົວເຮືອນ | | x | | 1.56 |
| *3.1.2a ບໍ່ມີຄົວເຮືອນທີ່ສູນເສຍທີ່ດິນໃຫ້ແກ່ ໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ* | | | 1.56 | |
| *3.1.2b ສ່ວນໃຫຍ່ຂອງຄົວເຮືອນທີ່ສູນເສຍທີ່ດິນໃຫ້ແກ່ໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ ແມ່ນໄດ້ສູນເສຍທີ່ດິນ ໜ້ອຍກວ່າ ເຄິ່ງໜຶ່ງຂອງເນື້ອທີ່ດິນ ທີ່ເຂົາເຈົ້າມີທັງໝົດ* | | | 1.04 | |
| *3.1.2c ສ່ວນໃຫຍ່ຂອງຄົວເຮືອນທີ່ສູນເສຍທີ່ດິນໃຫ້ແກ່ໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ ແມ່ນໄດ້ສູນເສຍທີ່ດິນ ເຄິ່ງໜຶ່ງ ຫຼື ຫຼາຍກວ່າ ຂອງເນື້ອທີ່ດິນ ທີ່ເຂົາເຈົ້າມີທັງໝົດ* | | | 0.52 | |
| *3.1.2d ສ່ວນໃຫຍ່ຂອງຄົວເຮືອນທີ່ສູນເສຍທີ່ດິນໃຫ້ແກ່ໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດແມ່ນໄດ້ສູນເສຍທີ່ດິນ ທີ່ເຂົາເຈົ້າມີທັງໝົດ* | | | 0 | |
| 3.2 ການຊົດເຊີຍ ສຳລັບ ທີ່ດິນທີ່ສູນເສຍໃຫ້ໂຄງການ | | | | 3.13 |
| 3.2.1 ຜູ້ທີ່ໄດ້ຮັບການຊົດເຊີຍ | | x | | 1.04 |
| *3.2.1a ຄົວເຮືອນ ທີ່ສູນເສຍທີ່ດິນທັງໝົດ (ທີ່ສູນເສຍທີ່ດິນໃຫ້ແກ່ໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ) ໄດ້ຮັບການຊົດເຊີຍ ຫຼື ບໍ່ມີຄົວເຮືອນທີ່ສູນເສຍທີ່ດິນໃຫ້ແກ່ໂຄງການເຊົ່າ ແລະ ສຳປະທານທີ່ດິນ* | | | 1.04 | |

| ຕົວຊີ້ວັດ | LCI | QI | ຄະແນນ | ຄະແນນ ສູງສຸດ |
|---|---|---|---|---|
| *3.2.1b ມີພຽງຄົວເຮືອນສ່ວນໃດສ່ວນໜຶ່ງເທົ່ານັ້ນ ທີ່ສູນເສຍທີ່ດິນໃຫ້ແກ່ໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ ໄດ້ຮັບການຊົດເຊີຍ* | | | 0.52 | |
| *3.2.1c ບໍ່ມີຄົວເຮືອນໃດທີ່ສູນເສຍທີ່ດິນໃຫ້ແກ່ໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ ທີ່ໄດ້ຮັບການຊົດເຊີຍ* | | | 0 | |
| 3.2.2 ຂະບວນການຊົດເຊີຍ | | x | | 1.04 |
| *3.2.2a ການຄິດໄລ່ອັດຕາຄ່າຊົດເຊີຍ ແມ່ນໄດ້ອີງໃສ່ຂະບວນການທີ່ເປັນທາງການ ຕາມ ລະບຽບກົດໝາຍ ເຊັ່ນ: ຕາມຫຼັກການທີ່ກໍານົດໄວ້ໃນ ດໍາລັດ 192/ນຍ ຫຼື ບໍ່ມີຄົວເຮືອນທີ່ສູນເສຍທີ່ດິນໃຫ້ແກ່ໂຄງການເຊົ່າ ແລະ ສໍາປະທານທີ່ດິນ* | | | 1.04 | |
| *3.2.2b ການຄິດໄລ່ອັດຕາຄ່າຊົດເຊີຍ ແມ່ນເປັນການເຈລະຈາແບບບໍ່ເປັນທາງການ ລະຫວ່າງ ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ, ນັກລົງທຶນ ແລະ ຊາວບ້ານ* | | | 0.69 | |
| *3.2.2c ການຄິດໄລ່ອັດຕາຄ່າຊົດເຊີຍ ແມ່ນເປັນການເຈລະຈາແບບບໍ່ເປັນທາງການ ລະຫວ່າງ ນັກລົງທຶນ ແລະ ຄົວເຮືອນທີ່ ທີ່ສູນເສຍທີ່ດິນໃຫ້ແກ່ໂຄງການເຊົ່າ ແລະ ສໍາປະທານທີ່ດິນ ເທົ່ານັ້ນ* | | | 0.35 | |
| *3.2.2d ການຄິດໄລ່ອັດຕາຄ່າຊົດເຊີຍ ແມ່ນ ນັກລົງທຶນ ຫຼື ຂະແໜງການທີ່ກ່ຽວຂ້ອງຂອງລັດ ເປັນຜູ້ກໍານົດ ໂດຍບໍ່ມີການເຈລະຈາ ກັບ ຄົວເຮືອນ ທີ່ສູນເສຍທີ່ດິນໃຫ້ແກ່ໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຫຼື ບໍ່ມີຄົວເຮືອນໃດໄດ້ຮັບການຊົດເຊີຍເລີຍ* | | | 0 | |
| 3.2.3 ການມອບຄ່າຊົດເຊີຍ | | x | | 1.04 |
| *3.2.3a ຄ່າຊົດເຊີຍ ແມ່ນໄດ້ຈ່າຍໃຫ້ແກ່ຄົວເຮືອນ ທີ່ສູນເສຍທີ່ດິນໃຫ້ແກ່ໂຄງການເຊົ່າ ແລະ ສໍາປະທານທີ່ດິນ ແລ້ວ ຫຼື ມີຄົວເຮືອນທີ່ສູນເສຍທີ່ດິນໃຫ້ແກ່ໂຄງການເຊົ່າ ແລະ ສໍາປະທານທີ່ດິນ* | | | 1.04 | |
| *3.2.3b ມີພຽງແຕ່ຄ່າຊົດເຊີຍ ສ່ວນໃດສ່ວນໜຶ່ງເທົ່ານັ້ນ ທີ່ໄດ້ຈ່າຍໃຫ້ແກ່ ຄົວເຮືອນທີ່ສູນເສຍທີ່ດິນໃຫ້ແກ່ໂຄງການເຊົ່າ ແລະ ສໍາປະທານທີ່ດິນ* | | | 0.52 | |
| *3.2.3c ບໍ່ມີຄ່າຊົດເຊີຍໃດໆເລີຍ ທີ່ໄດ້ຈ່າຍໃຫ້ ຄົວເຮືອນທີ່ສູນເສຍທີ່ດິນໃຫ້ແກ່ໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຫຼື ຄົວເຮືອນທີ່ສູນເສຍທີ່ດິນໃຫ້ແກ່ໂຄງການເຊົ່າ ແລະ ສໍາປະທານທີ່ດິນນັ້ນ ບໍ່ໄດ້ຮັບການຊົດເຊີຍເລີຍ* | | | 0 | |
| 3.3 ການຈ່າຍຄ່າເຊົ່າ-ສໍາປະທານ, ພາສີ-ອາກອນ | | x | | 3.13 |
| *3.3a ບໍລິສັດໄດ້ຈ່າຍຄ່າເຊົ່າ-ສໍາປະທານ, ພັນທະ ແລະ ພາສີ-ອາກອນທີ່ກ່ຽວຂ້ອງທັງໝົດ ຄົບຕາມຈໍານວນ, ບໍລິສັດຍັງຢູ່ໃນໄລຍະຍົກເວັ້ນການຊໍາລະຄ່າພັນທະເຫຼົ່ານັ້ນ* | | | 3.13 | |
| *3.3b ບໍລິສັດໄດ້ຈ່າຍ ຄ່າເຊົ່າ-ສໍາປະທານ, ຄ່າພັນທະ ແລະ ພາສີ-ອາກອນ ຈໍານວນໜຶ່ງເທົ່ານັ້ນ ແຕ່ບໍ່ ເຕັມຈໍານວນ ແລະ ບໍລິສັດບໍ່ໄດ້ຢູ່ໃນໄລຍະຍົກເວັ້ນການຊໍາລະພັນທະເຫຼົ່ານັ້ນ* | | | 1.56 | |
| *3.3c ຄ່າເຊົ່າ-ສໍາປະທານ, ຄ່າພັນທະ ແລະ ພາສີ-ອາກອນ ສ່ວນໃຫຍ່ ແມ່ນຍັງບໍ່ໄດ້ ແລະ ບໍລິສັດບໍ່ຢູ່ໃນໄລຍະຍົກເວັ້ນການຊໍາລະພັນທະເຫຼົ່ານັ້ນ* | | | 0 | |
| 3.4 ການປະກອບສ່ວນໃນການພັດທະນາພື້ນຖານໂຄງລ່າງຢູ່ທ້ອງຖິ່ນ | | | | 3.13 |
| 3.4.1 ການຕອບສະໜອງການພັດທະນາພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກ | | x | | 3.13 |
| *3.4.1a ໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ ໄດ້ຕອບສະໜອງ ການປັບປຸງພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກ ທີ່ໄດ້ໃຫ້ຄໍາໝັ້ນສັນຍາທັງໝົດ ແລ້ວ ມາຮອດ ໄລຍະດໍາເນີນການສໍາພາດເກັບກໍາຂໍ້ມູນ ຫຼື ໂຄງການບໍ່ໄດ້ໃຫ້ຄໍາໝັ້ນສັນຍາວ່າຈະສະໜອງ ຫຼື ປັບປຸງພື້ນຖານໂຄງລ່າງ ຫຼື ສິ່ງອໍານວຍຄວາມສະດວກໃດໆ ໃຫ້ແກ່ບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ* | | | 1.56 | |
| *3.4.1b ໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ ໄດ້ຕອບສະໜອງ ການປັບປຸງພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກ ທີ່ໄດ້ໃຫ້ຄໍາໝັ້ນສັນຍາ ສ່ວນໃຫຍ່ແລ້ວ ມາຮອດໄລຍະດໍາເນີນການສໍາພາດເກັບກໍາຂໍ້ມູນ* | | | 1.04 | |
| *3.4.1c ໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ ໄດ້ຕອບສະໜອງ ການປັບປຸງພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກ ທີ່ໄດ້ໃຫ້ຄໍາໝັ້ນສັນຍາ ສ່ວນໃດສ່ວນໜຶ່ງເທົ່ານັ້ນ ມາຮອດ ໄລຍະດໍາເນີນການສໍາພາດເກັບກໍາຂໍ້ມູນ* | | | 0.52 | |
| *3.4.1d ໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ ບໍ່ໄດ້ຕອບສະໜອງ ການປັບປຸງພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກທີ່ໄດ້ໃຫ້ຄໍາໝັ້ນສັນຍາໃດໆເລີຍ ມາຮອດໄລຍະດໍາເນີນການສໍາພາດເກັບກໍາຂໍ້ມູນ* | | | 0 | |

| ຕົວຊີ້ວັດ | LCI | QI | ຄະແນນ | ຄະແນນ ສູງສຸດ |
|---|---|---|---|---|
| 3.4.2 ການເຈລະຈາກ່ຽວກັບການປັບປຸງພື້ນຖານໂຄງລ່າງ | | x | | 1.56 |
| *3.4.2a ໄດ້ປຶກສາກັບຊາວບ້ານທີ່ໄດ້ຮັບຜົນກະທົບ ແລະ ຕອບສະໜອງ ຫຼື ປັບປຸງພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກ ຕາມການສະເໜີຂອງຊາວບ້ານ ຫຼື ໂຄງການບໍ່ເຄີຍໄດ້ໃຫ້ຄໍາໝັ້ນສັນຍາວ່າຈະສະໜອງ ຫຼື ປັບປຸງພື້ນຖານໂຄງລ່າງປະເພດໃດໆ ໃຫ້ແກ່ບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ* | | | *1.56* | |
| *3.4.2b ໄດ້ປຶກສາກັບຊາວບ້ານທີ່ໄດ້ຮັບຜົນກະທົບ ກ່ຽວກັບ ປະເພດຂອງພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກ ແຕ່ບໍ່ໄດ້ຕອບສະໜອງຕາມການສະເໜີຂອງຊາວບ້ານ* | | | *0.78* | |
| *3.42c ບໍ່ໄດ້ມີການປຶກສາຫາລືກັບຊາວບ້ານທີ່ໄດ້ຮັບຜົນກະທົບເລີຍ ກ່ຽວກັບ ປະເພດຂອງພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກ* | | | *0* | |
| 3.5 ການຫັນປ່ຽນທີ່ດິນທີ່ມີຄຸນຄ່າສູງ | | | | 3.13 |
| 3.5.1 ການນໍາໃຊ້ທີ່ດິນທີ່ມີຄຸນຄ່າສູງ | | x | | 1.56 |
| *3.5.1a ສ່ວນໃຫຍ່ຂອງເນື້ອທີ່ດິນເຊົ່າ ແລະ ສໍາປະທານ ແມ່ນ ປ່າຊຸດໂຊມ ຫຼື ທີ່ດິນປອກໂຫຼ້ນ ເຊັ່ນ: ທີ່ດິນປະເພດອື່ນ ທີ່ມີຄຸນຄ່າສູງກວ່າ ກວມເອົາສັດສ່ວນ ສ່ວນໜ້ອຍເທົ່ານັ້ນ* | | | *1.56* | |
| *3.5.1b ເນື້ອທີ່ດິນເຊົ່າ ແລະ ສໍາປະທານ ທີ່ເປັນ ປ່າຊຸດໂຊມ ຫຼື ທີ່ດິນປອກໂຫຼ້ນ ກວມເອົາສັດສ່ວນສ່ວນໃດໜຶ່ງເທົ່ານັ້ນ ເຊັ່ນ: ສ່ວນທີ່ເຫຼືອ ເປັນທີ່ດິນປະເພດອື່ນ ທີ່ມີຄຸນຄ່າສູງກວ່າ* | | | *0.78* | |
| *3.5.1c ເນື້ອທີ່ດິນເຊົ່າ ແລະ ສໍາປະທານ ທີ່ ປ່າຊຸດໂຊມ ຫຼື ທີ່ດິນປອກໂຫຼ້ນ ກວມເອົາສັດສ່ວນສ່ວນໜ້ອຍເທົ່ານັ້ນ ແຕ່ພື້ນທີ່ສ່ວນໃຫຍ່ ແມ່ນທີ່ດິນປະເພດອື່ນ ທີ່ມີຄຸນຄ່າສູງກວ່າ* | | | *0* | |
| 3.5.2 ບົດບາດຂອງທີ່ດິນເຊົ່າ ແລະ ສໍາປະທານ ຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນ | | x | | 1.56 |
| *3.5.2a ພື້ນທີ່ ທີ່ອະນຸມັດໃຫ້ແກ່ການເຊົ່າ ແລະ ສໍາປະທານ ແມ່ນບໍ່ມີຄຸນຄ່າ ຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບ ອີງຕາມທັດສະນະ ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ* | | | *1.56* | |
| *3.5.2b ພື້ນທີ່ສ່ວນໃດໜຶ່ງ ທີ່ອະນຸມັດໃຫ້ແກ່ການເຊົ່າ ແລະ ສໍາປະທານ ແມ່ນມີຄຸນຄ່າ ຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບ ອີງຕາມທັດສະນະຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ* | | | *0.78* | |
| *3.5.2c ພື້ນທີ່ ສ່ວນໃຫຍ່ ທີ່ອະນຸມັດໃຫ້ແກ່ການເຊົ່າ ແລະ ສໍາປະທານ ແມ່ນມີຄຸນຄ່າ ຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບ ອີງຕາມທັດສະນະ ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ* | | | *0* | |
| 3.6 ການປ່ຽນແປງດ້ານລາຍຮັບ | | x | | 3.13 |
| *3.6a ລາຍຮັບຂອງຄອບຄົວ ຂອງຊາວບ້ານ ທີ່ໄດ້ຮັບຜົນກະທົບຈາກໂຄງການ ເພີ່ມຂຶ້ນຫຼາຍ ນັບຕັ້ງແຕ່ມີການສໍາປະທານທີ່ດິນ ຂອງລັດ ເປັນຕົ້ນມາ* | | | *3.13* | |
| *3.6b ລາຍຮັບຂອງຄອບຄົວ ຂອງຊາວບ້ານ ທີ່ໄດ້ຮັບຜົນກະທົບຈາກໂຄງການ ເພີ່ມຂຶ້ນໜ້ອຍໜຶ່ງ ນັບຕັ້ງແຕ່ມີການສໍາປະທານທີ່ດິນ ຂອງລັດ ເປັນຕົ້ນມາ* | | | *2.08* | |
| *3.6c ລາຍຮັບຂອງຄອບຄົວ ຂອງຊາວບ້ານ ທີ່ໄດ້ຮັບຜົນກະທົບຈາກໂຄງການ ສໍາເກົ່າ ຫຼື ເພີ່ມຂຶ້ນ ຫຼື ຫຼຸດລົງໜ້ອຍໜຶ່ງ ແຕ່ບໍ່ກ່ຽວຂ້ອງກັບ ໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ* | | | *1.04* | |
| *3.6d ລາຍຮັບຂອງຄອບຄົວ ຂອງຊາວບ້ານ ທີ່ໄດ້ຮັບຜົນກະທົບຈາກໂຄງການ ຫຼຸດລົງໜ້ອຍໜຶ່ງ ຫຼື ຫຼຸດລົງຫຼາຍ ເນື່ອງຈາກການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ* | | | *0* | |
| 3.7 ການປ່ຽນແປງຂອງຊັບພະຍາກອນທໍາມະຊາດ | | | | 3.13 |
| 3.7.1 ການປ່ຽນແປງ ດ້ານທີ່ດິນກະສິກໍາ | | x | | 0.63 |
| *3.7.1a ທີ່ດິນກະສິກໍາ ຢູ່ພາຍໃນບ້ານທີ່ໄດ້ຮັບຜົນກະທົບ ເພີ່ມຂຶ້ນ ຫຼື ສໍາເກົ່າ ນັບຕັ້ງແຕ່ມີໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຢູ່ພາຍໃນບ້ານ ຫຼື ຫຼຸດລົງ ແຕ່ບໍ່ກ່ຽວຂ້ອງກັບໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ* | | | *0.63* | |
| *3.7.1b ທີ່ດິນກະສິກໍາ ຢູ່ພາຍໃນບ້ານທີ່ໄດ້ຮັບຜົນກະທົບ ຫຼຸດລົງໜ້ອຍໜຶ່ງ ນັບຕັ້ງແຕ່ມີໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຢູ່ພາຍໃນບ້ານ* | | | *0.31* | |

| ຕົວຊີ້ວັດ | LCI | QI | ຄະແນນ | ຄະແນນ ສູງສຸດ |
|---|---|---|---|---|
| *3.7.1c ທີ່ດິນກະສິກຳ ຢູ່ພາຍໃນບ້ານທີ່ໄດ້ຮັບຜົນກະທົບ ຫຼຸດລົງຫຼາຍ ນັບຕັ້ງແຕ່ມີໂຄງການເຊື່ອ ແລະ ສຳປະທານທີ່ດິນ ຢູ່ພາຍໃນບ້ານ* | | | *0* | |
| 3.7.2 ການປ່ຽນແປງ ດ້ານ ເຄື່ອງປ່າຂອງດົງ, ສັດປ່າ, ພືດ ແລະ ສັດນ້ຳ | | x | | 0.63 |
| *3.7.2a ເຄື່ອງປ່າຂອງດົງ, ສັດປ່າ, ພືດ ແລະ ສັດນ້ຳ ຢູ່ພາຍໃນບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ເພີ່ມຂຶ້ນ ຫຼື ມີສ່ຳເກົ່າ ນັບຕັ້ງແຕ່ມີໂຄງການເຊື່ອ ແລະ ສຳປະທານທີ່ດິນ ຂອງລັດ ຫຼື ຫຼຸດລົງ ແຕ່ບໍ່ກ່ຽວຂ້ອງກັບໂຄງການເຊື່ອ ແລະ ສຳປະທານທີ່ດິນ ຂອງລັດ* | | | *0.63* | |
| *3.7.2b ເຄື່ອງປ່າຂອງດົງ, ສັດປ່າ, ພືດ ແລະ ສັດນ້ຳ ຢູ່ພາຍໃນບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ຫຼຸດລົງໜ້ອຍໜຶ່ງ ນັບຕັ້ງແຕ່ມີໂຄງການເຊື່ອ ແລະ ສຳປະທານທີ່ດິນ ຂອງລັດ ຢູ່ພາຍໃນບ້ານ* | | | *0.31* | |
| *3.7.2c ເຄື່ອງປ່າຂອງດົງ, ສັດປ່າ, ພືດ ແລະ ສັດນ້ຳ ຢູ່ພາຍໃນບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ຫຼຸດລົງຫຼາຍ ນັບຕັ້ງແຕ່ມີໂຄງການເຊື່ອ ແລະ ສຳປະທານທີ່ດິນ ຂອງລັດ ຢູ່ພາຍໃນບ້ານ* | | | *0* | |
| 3.7.3 ການປ່ຽນແປງ ດ້ານໄມ້ ແລະ ຟືນດັງໄຟ | | x | | 0.63 |
| *3.7.3a ໄມ້ ແລະ ຟືນດັງໄຟ ທີ່ມີຢູ່ພາຍໃນບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການເພີ່ມຂຶ້ນ ຫຼື ສ່ຳເກົ່າ ນັບຕັ້ງແຕ່ມີໂຄງການເຊື່ອ ແລະ ສຳປະທານທີ່ດິນ ຢູ່ພາຍໃນບ້ານ ຫຼື ຫຼຸດລົງ ແຕ່ບໍ່ກ່ຽວຂ້ອງກັບ ໂຄງການເຊື່ອ ແລະ ສຳປະທານທີ່ດິນ* | | | *0.63* | |
| *3.7.3b ໄມ້ ແລະ ຟືນດັງໄຟ ທີ່ມີຢູ່ພາຍໃນບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ຫຼຸດລົງໜ້ອຍໜຶ່ງ ນັບຕັ້ງແຕ່ມີໂຄງການເຊື່ອ ແລະ ສຳປະທານທີ່ດິນ ຢູ່ພາຍໃນບ້ານ ຊຶ່ງການຫຼຸດລົງດັ່ງກ່າວກ່ຽວຂ້ອງກັບໂຄງການເຊື່ອ ແລະ ສຳປະທານ* | | | *0.31* | |
| *3.7.3c ໄມ້ ແລະ ຟືນດັງໄຟ ທີ່ມີຢູ່ພາຍໃນບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ຫຼຸດລົງຫຼາຍ ນັບຕັ້ງແຕ່ມີໂຄງການເຊື່ອ ແລະ ສຳປະທານທີ່ດິນ ຢູ່ພາຍໃນບ້ານ ຊຶ່ງການຫຼຸດລົງດັ່ງກ່າວກ່ຽວຂ້ອງກັບໂຄງການເຊື່ອ ແລະ ສຳປະທານ* | | | *0* | |
| 3.7.4 ການປ່ຽນແປງ ດ້ານການຊົມໃຊ້ນ້ຳສະອາດ | | x | | 0.63 |
| *3.7.4a ນ້ຳສະອາດ ສຳລັບ ການຊົມໃຊ້ຢູ່ພາຍໃນບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ເພີ່ມຂຶ້ນ ຫຼື ສ່ຳເກົ່າ ນັບຕັ້ງແຕ່ມີໂຄງການເຊື່ອ ແລະ ສຳປະທານທີ່ດິນ ຢູ່ພາຍໃນບ້ານ ຫຼື ຫຼຸດລົງ ແຕ່ບໍ່ກ່ຽວຂ້ອງກັບໂຄງການເຊື່ອ ແລະ ສຳປະທານທີ່ດິນ* | | | *0.63* | |
| *3.7.4b ນ້ຳສະອາດ ສຳລັບ ການຊົມໃຊ້ຢູ່ພາຍໃນບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ເພີ່ມຂຶ້ນ ຫຼື ສ່ຳເກົ່າ ນັບຕັ້ງແຕ່ມີໂຄງການເຊື່ອ ແລະ ສຳປະທານທີ່ດິນ ຢູ່ພາຍໃນບ້ານ ຫຼື ຫຼຸດລົງໜ້ອຍໜຶ່ງ ແຕ່ບໍ່ກ່ຽວຂ້ອງກັບໂຄງການເຊື່ອ ແລະ ສຳປະທານທີ່ດິນ* | | | *0.31* | |
| *3.7.4c ນ້ຳສະອາດ ສຳລັບ ການຊົມໃຊ້ຢູ່ພາຍໃນບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ຫຼຸດລົງຫຼາຍ ນັບຕັ້ງແຕ່ມີໂຄງການເຊື່ອ ແລະ ສຳປະທານທີ່ດິນ ຢູ່ພາຍໃນບ້ານ ຊຶ່ງການຫຼຸດລົງດັ່ງກ່າວແມ່ນກ່ຽວຂ້ອງກັບໂຄງການເຊື່ອ ແລະ ສຳປະທານທີ່ດິນ* | | | *0* | |
| 3.7.5 ການປ່ຽນແປງ ດ້ານນ້ຳສຳລັບການຜະລິດກະສິກຳ | | x | | 0.63 |
| *3.7.5a ນ້ຳ ສຳລັບ ການຜະລິດກະສິກຳ ຢູ່ໃນບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ເພີ່ມຂຶ້ນ ຫຼື ສ່ຳເກົ່າ ນັບຕັ້ງແຕ່ມີໂຄງການເຊື່ອ ແລະ ສຳປະທານທີ່ດິນ ຢູ່ພາຍໃນບ້ານ ຫຼື ຫຼຸດລົງ ແຕ່ບໍ່ກ່ຽວຂ້ອງກັບໂຄງການເຊື່ອ ແລະ ສຳປະທານທີ່ດິນ* | | | *0.63* | |
| *3.7.5b ນ້ຳ ສຳລັບ ການຜະລິດກະສິກຳ ຢູ່ໃນບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ຫຼຸດລົງໜ້ອຍໜຶ່ງ ນັບຕັ້ງແຕ່ມີໂຄງການເຊື່ອ ແລະ ສຳປະທານທີ່ດິນຢູ່ພາຍໃນບ້ານ ຊຶ່ງການຫຼຸດລົງດັ່ງກ່າວແມ່ນກ່ຽວຂ້ອງກັບໂຄງການເຊື່ອ ແລະ ສຳປະທານທີ່ດິນ* | | | *0.21* | |
| *3.7.5c ນ້ຳ ສຳລັບ ການຜະລິດກະສິກຳ ຢູ່ໃນບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ຫຼຸດລົງຫຼາຍ ນັບຕັ້ງແຕ່ມີໂຄງການເຊື່ອ ແລະ ສຳປະທານທີ່ດິນ ຢູ່ພາຍໃນບ້ານ ຊຶ່ງການຫຼຸດລົງດັ່ງກ່າວແມ່ນກ່ຽວຂ້ອງກັບໂຄງການເຊື່ອ ແລະ ສຳປະທານທີ່ດິນ* | | | *0* | |
| 3.8 ຜົນກະທົບຕໍ່ເສດຖະກິດຢູ່ທ້ອງຖິ່ນ | | | | 3.13 |
| 3.8.1 ຜົນປະໂຫຍດຈາກການເຮັດສັນຍາການຜະລິດກະສິກຳກັບບໍລິສັດ | | x | | 1.56 |
| *3.8.1a ບໍລິສັດໄດ້ເຮັດສັນຍາການຜະລິດກະສິກຳ ກັບ ບ້ານທີ່ໄດ້ຮັບຜົນກະທົບ ຊຶ່ງຊາວບ້ານພໍໃຈກັບຜົນປະໂຫຍດທີ່ໄດ້ຮັບ* | | | *1.56* | |

| ຕົວຊີ້ວັດ | LCI | QI | ຄະແນນ | ຄະແນນ ສູງສຸດ |
|---|---|---|---|---|
| *3.8.1b ບໍລິສັດໄດ້ເຮັດສັນຍາການຜະລິດກະສິກໍາ ກັບ ບ້ານທີ່ໄດ້ຮັບຜົນກະທົບ ຊຶ່ງຊາວບ້ານຂ້ອນຂ້າງພໍໃຈກັບຜົນປະໂຫຍດທີ່ໄດ້ຮັບ* | | | 0.78 | |
| *3.8.1c ບໍລິສັດໄດ້ເຮັດສັນຍາການຜະລິດກະສິກໍາ ກັບ ບ້ານທີ່ໄດ້ຮັບຜົນກະທົບ ຊຶ່ງຊາວບ້ານບໍ່ພໍໃຈກັບຜົນປະໂຫຍດທີ່ໄດ້ຮັບ ຫຼື ບໍລິສັດບໍ່ໄດ້ເຮັດສັນຍາການຜະລິດກັບບ້ານທີ່ໄດ້ຮັບຜົນກະທົບເລີຍ* | | | 0 | |
| 3.8.2 ການປະກອບສ່ວນ ເຂົ້າໃນການພັດທະນາເສດຖະກິດ ແລະ ການປຸງແຕ່ງຜົນຜະລິດຢູ່ທ້ອງຖິ່ນ | | x | | |
| *3.8.2a ບໍລິສັດນໍາໃຊ້ ແນວພັນ, ຝຸ່ນ, ເຄື່ອງມືທໍາການຜະລິດ ແລະ ພະລັງງານ (ນໍ້າມັນເຊື້ອໄຟ) ທີ່ມີຢູ່ພາຍໃນທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດໂຄງການ ແລະ ປຸງແຕ່ງຜົນຜະລິດ ທີ່ໄດ້ຈາກການລົງທຶນຢູ່ໃນ ສປປ ລາວ* | | | 1.56 | |
| *3.8.2b ບໍລິສັດນໍາໃຊ້ ແນວພັນ, ຝຸ່ນ, ເຄື່ອງມືທໍາການຜະລິດ ແລະ ພະລັງງານ (ນໍ້າມັນເຊື້ອໄຟ) ທີ່ມີຢູ່ພາຍໃນທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດໂຄງການ ຫຼື ປຸງແຕ່ງຜົນຜະລິດ ທີ່ໄດ້ຈາກການລົງທຶນຢູ່ໃນ ສປປ ລາວ* | | | 0.78 | |
| *3.8.2c ບໍລິສັດນໍາໃຊ້ ແນວພັນ, ຝຸ່ນ, ເຄື່ອງມືທໍາການຜະລິດ ແລະ ພະລັງງານ (ນໍ້າມັນເຊື້ອໄຟ) ຈາກ ພາຍນອກ ເພື່ອຈັດຕັ້ງປະຕິບັດໂຄງການ ແລະ/ຫຼື ປຸງແຕ່ງຜົນຜະລິດ ທີ່ໄດ້ຈາກການລົງທຶນຢູ່ຕ່າງປະເທດ* | | | 0 | |
| **4. ຜົນກະທົບດ້ານສັງຄົມ** | | | | **25** |
| 4.1: ການນໍາໃຊ້ແຮງງານຕ່າງປະເທດ | | x | | 3.13 |
| *4.1a ບໍລິສັດ ນໍາໃຊ້ແຮງງານ ຕ່າງປະເທດ ທີ່ອອກແຮງງານດ້ວຍຮ່າງກາຍ ໜ້ອຍກວ່າ 15% ແລະ ພະນັກງານວິຊາການ/ຊ່ຽວຊານຕ່າງປະເທດ ໜ້ອຍກວ່າ 25% ຫຼື ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການບໍ່ຕ້ອງການເຮັດວຽກກັບບໍລິສັດ ແລະ ບໍ່ກ່ຽວຂ້ອງກັບໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ ເຊັ່ນ: ພວກເຂົາມີທາງເລືອກທີ່ດີກວ່າ* | | | 3.13 | |
| *4.1.b ບໍລິສັດ ນໍາໃຊ້ແຮງງານຕ່າງປະເທດ ຫຼາຍກວ່າ 15% ຫຼື ພະນັກງານວິຊາການ/ຊ່ຽວຊານຕ່າງປະເທດ ຫຼາຍກວ່າ 25%* | | | 1.57 | |
| *4.1c ບໍລິສັດ ນໍາໃຊ້ແຮງງານຕ່າງປະເທດ ທີ່ອອກແຮງງານດ້ວຍຮ່າງກາຍຫຼາຍກວ່າ 15% ແລະ ພະນັກງານວິຊາການ/ຊ່ຽວຊານຕ່າງປະເທດ ຫຼາຍກວ່າ 25% ຫຼື ບໍລິສັດບໍ່ໄດ້ຈ້າງແຮງງານຈາກບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການເລີຍ* | | | 0 | |
| 4.2: ເກນອາຍຸ ແລະ ບົດບາດຍິງ-ຊາຍ ຂອງແຮງງານ | | | | 3.13 |
| 4.2.1 ກຸ່ມອາຍຸຂອງແຮງງານ | | x | | 1.56 |
| *4.2.1a ແຮງງານທັງໝົດທີ່ ຮັບຈ້າງງານຢູ່ໂຄງການເຊົ່າ ແລະ ສໍາປະທານທີ່ດິນລັດ ແມ່ນຢູ່ໃນເກນອາຍຸຕາມທີ່ໄດ້ກໍານົດຢູ່ກົດໝາຍແຮງງານ (14-64 ປີ) ຫຼື ຊາວບ້ານ ທີ່ໄດ້ຮັບຜົນກະທົບຈາກໂຄງການບໍ່ຕ້ອງການເຮັດວຽກກັບໂຄງການ ເຊັ່ນ: ພວກເຂົາມີທາງເລືອກທີ່ດີກວ່າ* | | | 1.56 | |
| *4.2.1b ແຮງງານທີ່ຮັບຈ້າງງານຢູ່ໂຄງການເຊົ່າ ແລະ ສໍາປະທານທີ່ດິນລັດ ແມ່ນບໍ່ຢູ່ໃນເກນອາຍຸຕາມທີ່ໄດ້ກໍານົດຢູ່ໃນກົດໝາຍ ແຮງງານ ຊຶ່ງມີຢ່າງໜ້ອຍ 1 ແຮງງານ ມີອາຍຸຕໍ່າກວ່າ 14 ປີ ຫຼື ສູງກວ່າ 64 ປີ* | | | 0.78 | |
| *4.2.1c ແຮງງານຈໍານວນຫຼາຍ ທີ່ຮັບຈ້າງຢູ່ໂຄງການເຊົ່າ ແລະ ສໍາປະທານທີ່ດິນລັດ ແມ່ນບໍ່ຢູ່ໃນເກນອາຍຸຕາມທີ່ກໍານົດຢູ່ໃນກົດໝາຍ ແຮງງານ ຊຶ່ງມີຢ່າງໜ້ອຍ 1 ແຮງງານ ທີ່ ມີອາຍຸຕໍ່າກວ່າ 14 ປີ ແລະ ມີຢ່າງໜ້ອຍ 1 ແຮງງານ ທີ່ມີອາຍຸສູງກວ່າ 64 ປີ ຫຼື ໂຄງການບໍ່ໄດ້ຈ້າງແຮງງານຈາກທ້ອງຖິ່ນທີ່ໄດ້ຮັບຜົນກະທົບຈາກໂຄງການເລີຍ* | | | 0 | |
| 4.2.2 ສັດສ່ວນຂອງແຮງງານເພດຍິງ ແລະ ເພດຊາຍ | | x | | 1.56 |
| *4.2.2a ສັດສ່ວນຂອງ ແຮງງານເພດຊາຍ ແລະ ແຮງງານເພດຍິງ ທີ່ຮັບຈ້າງຢູ່ ໂຄງການແມ່ນເທົ່າກັນ ຫຼື ຊາວບ້ານທີ່ໄດ້ຮັບຜົນກະທົບຈາກ ໂຄງການ ບໍ່ຕ້ອງການເຮັດວຽກນໍາ ໂຄງການ ແລະ ບໍ່ກ່ຽວຂ້ອງ ກັບໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ ເຊັ່ນ: ເຂົາເຈົ້າມີທາງເລືອກທີ່ດີກວ່າ* | | | 1.56 | |
| *4.2.2b ສັດສ່ວນຂອງ ແຮງງານເພດຊາຍ ແລະ ແຮງງານເພດຍິງ ທີ່ຮັບຈ້າງຢູ່ໂຄງການ ແມ່ນບໍ່ເທົ່າກັນ ຫຼື ໂຄງການບໍ່ໄດ້ຈ້າງແຮງງານຈາກທ້ອງຖິ່ນທີ່ໄດ້ຮັບຜົນກະທົບຈາກໂຄງການເລີຍ* | | | 0 | |

| ຕົວຊີ້ວັດ | LCI | QI | ຄະແນນ | ຄະແນນສູງສຸດ |
|---|---|---|---|---|
| 4.3: ອັດຕາຄ່າຈ້າງແຮງງານ | | | | 3.13 |
| 4.3.1 ອັດຕາຄ່າຈ້າງທົ່ວໄປ | | x | | 1.56 |
| *4.3.1a ຄ່າຈ້າງທີ່ບໍລິສັດຈ່າຍໃຫ້ກຳມະກອນ ແມ່ນສູງກວ່າຄ່າຈ້າງພື້ນຖານ ຢູ່ສປປ ລາວ ຫຼື ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ບໍ່ຕ້ອງການເຮັດວຽກກັບບໍລິສັດ ແລະ ບໍ່ກ່ຽວຂ້ອງກັບໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ ເຊັ່ນ: ພວກເຂົາມີທາງເລືອກທີ່ດີກວ່າ* | | | *1.56* | |
| *4.3.1b ຄ່າຈ້າງທີ່ບໍລິສັດຈ່າຍໃຫ້ກຳມະກອນ ແມ່ນເທົ່າກັບ ຄ່າຈ້າງພື້ນຖານ ຢູ່ສປປ ລາວ* | | | *0.78* | |
| *4.3.1c ຄ່າຈ້າງທີ່ບໍລິສັດຈ່າຍໃຫ້ກຳມະກອນ ແມ່ນຕໍ່າກວ່າ ຄ່າຈ້າງພື້ນຖານ ຢູ່ສປປ ລາວ ຫຼື ໂຄງການບໍ່ໄດ້ຈ້າງແຮງງານຈາກທ້ອງຖິ່ນທີ່ໄດ້ຮັບຜົນກະທົບຈາກໂຄງການເລີຍ* | | | *0* | |
| 4.3.2 ຊ່ອງຫວ່າງ ຂອງອັດຕາຄ່າຈ້າງ ລະຫວ່າງ ແຮງງານເພດຍິງ ແລະ ເພດຊາຍ | | x | | 1.56 |
| *4.3.2a ບໍລິສັດຈ່າຍຄ່າຈ້າງໃຫ້ແຮງງານເພດຊາຍ ແລະ ເພດຍິງ ທີ່ເຮັດວຽກໃນໜ້າວຽກດຽວກັນ ສຳລັບການຈ້າງງານທັງໝົດ ຢ່າງເທົ່າທຽມກັນ (ມີສ່ວນຕ່າງທີ່ໜ້ອຍກວ່າ 10,000 ກີບ) ຫຼື ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ບໍ່ຕ້ອງການເຮັດວຽກກັບບໍລິສັດ ແລະ ບໍ່ກ່ຽວຂ້ອງກັບໂຄງການເຊົ່າ ແລະ ສຳປະທານທີ່ດິນ ເຊັ່ນ: ພວກເຂົາມີທາງເລືອກທີ່ດີກວ່າ* | | | *1.56* | |
| *4.3.2b ບໍລິສັດໄດ້ຈ່າຍຄ່າຈ້າງໃຫ້ແຮງງານເພດຊາຍ ແລະ ເພດຍິງ ທີ່ເຮັດໜ້າວຽກດຽວກັນ ຢ່າງໜ້ອຍປະເພດການຈ້າງງານໜຶ່ງ ບໍ່ເທົ່າທຽມກັນ (ມີສ່ວນຕ່າງທີ່ຫຼາຍກວ່າ 10,000 ກີບ) ແຕ່ມີຫຼາຍກວ່າ 50% ຂອງປະເພດການຈ້າງງານທັງໝົດ ແມ່ນບໍລິສັດ ຈ່າຍຄ່າຈ້າງໃຫ້ແກ່ແຮງງານເພດຊາຍ ແລະ ເພດຍິງ ຢ່າງເທົ່າທຽມກັນ* | | | *0.78* | |
| *4.3.2c ການຈ່າຍຄ່າຈ້າງໃຫ້ແກ່ແຮງງານເພດຊາຍ ແລະ ແຮງງານເພດຍິງ ສຳລັບໜ້າວຽກສ່ວນໃຫຍ່ (>50% ຂອງປະເພດໜ້າວຽກທັງໝົດ) ແມ່ນບໍ່ເທົ່າທຽມກັນ (ມີສ່ວນຕ່າງຫຼາຍກວ່າ 10,000 ກີບ) ຫຼື ໂຄງການບໍ່ໄດ້ຈ້າງແຮງງານຈາກທ້ອງຖິ່ນທີ່ໄດ້ຮັບຜົນກະທົບຈາກໂຄງການເລີຍ* | | | *0* | |
| 4.4: ການປະຕິບັດຕໍ່ແຮງງານ | | x | | 3.13 |
| *4.4a ແຮງງານທີ່ເຮັດວຽກກັບບໍລິສັດ ແມ່ນໄດ້ຮັບການປະຕິບັດເປັນຢ່າງດີ ຫຼື ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ບໍ່ຕ້ອງການເຮັດວຽກກັບບໍລິສັດ ແລະ ບໍ່ກ່ຽວຂ້ອງກັບໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ ເຊັ່ນ: ພວກເຂົາມີທາງເລືອກທີ່ດີກວ່າ* | | | *3.13* | |
| *4.4b ແຮງງານທີ່ເຮັດວຽກກັບບໍລິສັດ ບໍ່ໄດ້ຮັບການປະຕິບັດທີ່ດີ ຊຶ່ງມີຢ່າງໜ້ອຍ 1 ຫຼື 2 ດ້ານ ຈາກ 5 ດ້ານ ຈາກແບບຟອມການປະເມີນ ກ່ຽວກັບ ການປະຕິບັດຕໍ່ແຮງງານທີ່ບໍ່ດີ ລວມທັງການບໍ່ອະນຸຍາດໃຫ້ແຮງງານພັກໃນຊ່ວງເວລາເຮັດວຽກ, ການຈ່າຍຄ່າຈ້າງຊ້າ, ການຫັກຄ່າຈ້າງ, ການບໍ່ຈ່າຍຄ່າຈ້າງ ແລະ ອື່ນໆ* | | | *1.56* | |
| *4.4c ແຮງງານທີ່ເຮັດວຽກກັບບໍລິສັດ ໄດ້ຮັບການປະຕິບັດທີ່ດີ ຊຶ່ງມີຢ່າງໜ້ອຍ 3 ດ້ານ ຈາກ 5 ດ້ານ ຈາກແບບຟອມການປະເມີນ ກ່ຽວກັບ ການປະຕິບັດຕໍ່ແຮງງານທີ່ບໍ່ດີ ລວມທັງ ການບໍ່ອະນຸຍາດໃຫ້ແຮງງານພັກໃນຊ່ວງເວລາເຮັດວຽກ, ການຈ່າຍຄ່າຈ້າງຊ້າ, ການຫັກຄ່າຈ້າງ, ການບໍ່ຈ່າຍຄ່າຈ້າງ ແລະ ອື່ນໆ ຫຼື ບໍລິສັດບໍ່ໄດ້ຈ້າງແຮງງານຈາກທ້ອງຖິ່ນທີ່ໄດ້ຮັບຜົນກະທົບຈາກໂຄງການເລີຍ* | | | *0* | |
| 4.5: ແຫຼ່ງທີ່ມາຂອງແຮງງານ | | x | | 3.13 |
| *4.5a ຈຳນວນ ການຈ້າງການ ທີ່ຕອບສະໜອງໃຫ້ແກ່ ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ເທົ່າກັບ ຫຼື ຫຼາຍກວ່າ ຈຳນວນຄົວເຮືອນທີ່ໄດ້ຮັບຜົນກະທົບຈາກໂຄງການ (ຄົວເຮືອນທີ່ສູນເສຍທີ່ດິນໃຫ້ແກ່ໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ) ແລະ ໂອກາດໃນການຈ້າງງານທີ່ສ້າງຂຶ້ນໂດຍໂຄງການເຊົ່າ ແລະ ສຳປະທານ ມີການຫຼຸດລົງ ໜ້ອຍກວ່າ 50%ໃນຊ່ວງໄລຍະ 5 ປີ ຜ່ານມາ ຫຼື ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ບໍ່ຕ້ອງການເຮັດວຽກກັບໂຄງການ ແລະ ບໍ່ກ່ຽວຂ້ອງກັບໂຄງການເຊົ່າ ແລະ ສຳປະທານທີ່ດິນ ເຊັ່ນ: ພວກເຂົາມີທາງເລືອກທີ່ດີກວ່າ* | | | *3.13* | |
| *4.5b ຈຳນວນ ການຈ້າງການ ທີ່ຕອບສະໜອງໃຫ້ແກ່ ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ໜ້ອຍກວ່າ ຈຳນວນຄົວເຮືອນທີ່ໄດ້ຮັບຜົນກະທົບຈາກໂຄງການ (ຄົວເຮືອນທີ່ສູນເສຍທີ່ດິນໃຫ້ແກ່ໂຄງການເຊົ່າ ແລະ ສຳປະທານທີ່ດິນ ຂອງລັດ) ແລະ ໂອກາດໃນການຈ້າງງານ ທີ່ສ້າງຂຶ້ນໂດຍ ໂຄງການເຊົ່າ ແລະ ສຳປະທານ ຫຼຸດລົງ ຫຼາຍກວ່າ 50% ໃນຊ່ວງໄລຍະ 5 ປີຜ່ານມາ* | | | *1.57* | |
| *4.5c ບໍລິສັດບໍ່ໄດ້ຈ້າງແຮງງານຈາກທ້ອງຖິ່ນທີ່ໄດ້ຮັບຜົນກະທົບຈາກໂຄງການເລີຍ* | | | *0* | |

| ຕົວຊີ້ວັດ | LCI | QI | ຄະແນນ | ຄະແນນ ສູງສຸດ |
|---|---|---|---|---|
| 4.6: ຜົນກະທົບຕໍ່ສຸຂະພາບ ແລະ ຄວາມປອດໄພຂອງແຮງງານ | | | | 3.13 |
| 4.6.1: ການຕອບສະໜອງປະກັນສຸຂະພາບ/ຄ່າໃຊ້ຈ່າຍກ່ຽວກັບການປິ່ນປົວດ້ານສຸຂະພາບ | | x | | 1.04 |
| *4.6.1a ບໍລິສັດຕອບສະໜອງປະກັນສຸຂະພາບ ແລະ ຄ່າໃຊ້ຈ່າຍໃຫ້ແກ່ແຮງງານ ໃນກໍລະນີໄດ້ຮັບບາດເຈັບ ຫຼື ເຈັບເປັນ ທີ່ເກີດຈາກການຈ້າງງານ ຫຼື ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ບໍ່ຕ້ອງການເຮັດວຽກກັບບໍລິສັດ ແລະ ບໍ່ກ່ຽວຂ້ອງກັບໂຄງການເຊົ່າ ແລະ ສໍາປະທານທີ່ດິນ ເຊັ່ນ: ພວກເຂົາມີທາງເລືອກທີ່ດີກວ່າ* | | | *1.04* | |
| *4.6.1b ບໍລິສັດຕອບສະໜອງປະກັນສຸຂະພາບ ຫຼື ຄ່າໃຊ້ຈ່າຍໃຫ້ແກ່ແຮງງານ ໃນກໍລະນີໄດ້ຮັບບາດເຈັບ ຫຼື ເຈັບເປັນ ທີ່ເກີດຈາກການຈ້າງງານ ແຕ່ບໍ່ຕອບສະໜອງທັງສອງ ຢ່າງ* | | | *0.52* | |
| *4.6.1c ບໍລິສັດບໍ່ໄດ້ຕອບສະໜອງ ປະກັນສຸຂະພາບ ແລະ ຄ່າໃຊ້ຈ່າຍໃຫ້ແກ່ແຮງງານ ໃນກໍລະນີໄດ້ຮັບບາດເຈັບ ຫຼື ເຈັບເປັນ ທີ່ເກີດຈາກການຈ້າງງານ* | | | *0* | |
| 4.6.2: ການຕອບສະໜອງ ການຝຶກອົບຮົບ ແລະ ອຸປະກອນ ຄວາມປອດໄພ | | x | | 1.04 |
| *4.6.2a ມີການຝຶກອົບຮົມ ແລະ ສະໜອງອຸປະກອນ ຄວາມປອດໄພຢ່າງພຽງພໍໃຫ້ແກ່ແຮງງານ ໃນການປະຕິບັດໜ້າວຽກທີ່ມີຄວາມສ່ຽງ ຫຼື ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ບໍ່ຕ້ອງການເຮັດວຽກກັບໂຄງການ ແລະ ບໍ່ກ່ຽວຂ້ອງກັບໂຄງການເຊົ່າ ແລະ ສໍາປະທານທີ່ດິນ ເຊັ່ນ: ພວກເຂົາມີທາງເລືອກທີ່ດີກວ່າ* | | | *1.04* | |
| *4.6.2b. ມີການຝຶກອົບຮົມ ຫຼື ສະໜອງອຸປະກອນຄວາມປອດໄພຢ່າງພຽງພໍໃຫ້ແກ່ແຮງງານ ໃນການປະຕິບັດໜ້າວຽກທີ່ມີຄວາມສ່ຽງ ແຕ່ບໍ່ໄດ້ຕອບສະໜອງທັງສອງຢ່າງ* | | | *0.52* | |
| *4.6.2c.ບໍລິສັດບໍ່ໄດ້ສະໜອງການຝຶກອົບຮົມ ຫຼື ອຸປະກອນຄວາມປອດໄພຢ່າງພຽງພໍໃຫ້ແກ່ແຮງງານ ໃນການປະຕິບັດໜ້າວຽກທີ່ມີຄວາມສ່ຽງ* | | | *0* | |
| 4.6.3: ຜົນກະທົບຕໍ່ສຸຂະພາບ | | x | | 1.04 |
| *4.6.3a ສຸຂະພາບຂອງປະຊາຊົນ ຢູ່ໃນບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ບໍ່ມີການປ່ຽນແປງ ຫຼື ດີຂຶ້ນ ຫຼື ຊຸດໂຊມລົງ ແຕ່ບໍ່ກ່ຽວຂ້ອງກັບໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ* | | | *1.04* | |
| *4.6.3b ສຸຂະພາບຂອງປະຊາຊົນ ໃນບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ຊຸດໂຊມລົງໜ້ອຍໜຶ່ງ ເນື່ອງຈາກກິດຈະກໍາໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ* | | | *0.52* | |
| *4.6.3c ສຸຂະພາບຂອງປະຊາຊົນ ໃນບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ຊຸດໂຊມລົງຫຼາຍ ເນື່ອງຈາກກິດຈະກໍາໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ* | | | *0* | |
| 4.7: ຜົນກະທົບຕໍ່ຄວາມໝັ້ນຄົງດ້ານສະບຽງອາຫານ | | x | | 3.13 |
| *4.7a ຄວາມໝັ້ນຄົງທາງດ້ານສະບຽງອາຫານຂອງບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ເພີ່ມຂຶ້ນ ຫຼື ສໍ່າເກົ່າ ຫຼື ຫຼຸດລົງ ແຕ່ບໍ່ກ່ຽວຂ້ອງກັບໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ* | | | *3.13* | |
| *4.7b ຄວາມໝັ້ນຄົງທາງດ້ານສະບຽງອາຫານຂອງບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ຫຼຸດລົງໜ້ອຍໜຶ່ງ ເນື່ອງຈາກ ໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ* | | | *1.56* | |
| *4.7c ຄວາມໝັ້ນຄົງທາງດ້ານສະບຽງອາຫານຂອງບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ຫຼຸດລົງຫຼາຍ ເນື່ອງຈາກໂຄງການເຊົ່າ ແລະ ສໍາປະທານທີ່ດິນ ຂອງລັດ* | | | *0* | |
| 4.8 ການຖ່າຍທອດ ເຕັກໂນໂລຢີ ແລະ ການພັດທະນາຊຸມຊົນ | | | | 3.13 |
| 4.8.1 ການຖ່າຍທອດທາງດ້ານທັກສະອັນໃໝ່ | | x | | 1.04 |
| *4.8.1a ການຝຶກອົບຮົມທີ່ບໍລິສັດໄດ້ສະໜອງໃຫ້ແກ່ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ແມ່ນມີປະໂຫຍດຫຼາຍ ສໍາລັບ ການດໍາລົງຊີວິດ ຂອງຊາວບ້ານ ນອກຈາກການຈ້າງງານນໍາໂຄງການແລ້ວ* | | | *1.04* | |
| *4.8.1b ການຝຶກອົບຮົມທີ່ບໍລິສັດໄດ້ສະໜອງໃຫ້ແກ່ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ແມ່ນມີປະໂຫຍດໃນລະດັບໜຶ່ງ ສໍາລັບ ການດໍາລົງຊີວິດ ຂອງຊາວບ້ານ ນອກຈາກການຈ້າງງານ ນໍາໂຄງການແລ້ວ* | | | *0.52* | |
| *4.8.1c ການຝຶກອົບຮົມທີ່ບໍລິສັດໄດ້ສະໜອງໃຫ້ແກ່ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ແມ່ນບໍ່ມີປະໂຫຍດເລີຍ ສໍາລັບ ການດໍາລົງຊີວິດຂອງຊາວບ້ານ ນອກຈາກການຈ້າງງານນໍາໂຄງການແລ້ວ* | | | *0* | |

| ຕົວຊີ້ວັດ | LCI | QI | ຄະແນນ | ຄະແນນ ສູງສຸດ |
|---|---|---|---|---|
| 4.8.2 ການຖ່າຍທອດເຕັກໂນໂລຢີອັນໃໝ່ | | x | | 1.04 |
| *4.8.2a ບໍລິສັດໄດ້ແນະນໍາເຕັກໂນໂລຢີໃໝ່ ໃຫ້ແກ່ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຊາວບ້ານສາມາດໝູນໃຊ້ເທັກໂນໂລຍີອັນໃໝ່ດັ່ງກ່າວ ສ່ວນໃຫຍ່ ໃຫ້ເກີດປະໂຫຍດ ໃນການດໍາລົງຊີວິດ ຂອງຊາວບ້ານ ນອກຈາກການ ຈ້າງງານນໍາໂຄງການເຊົ່າ ແລະ ສໍາປະທານ* | | | *1.04* | |
| *4.8.2b ບໍລິສັດໄດ້ແນະນໍາເຕັກໂນໂລຢີໃໝ່ ໃຫ້ແກ່ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຊາວບ້ານສາມາດໝູນໃຊ້ເທັກໂນໂລຍີອັນໃໝ່ດັ່ງກ່າວ ສ່ວນໃດສ່ວນໜຶ່ງ ໃຫ້ເກີດປະໂຫຍດ ໃນການດໍາລົງຊີວິດ ຂອງຊາວບ້ານ ນອກຈາກການ ຈ້າງງານນໍາໂຄງການເຊົ່າ ແລະ ສໍາປະທານ* | | | *0.52* | |
| *4.8.2c ບໍລິສັດໄດ້ແນະນໍາເຕັກໂນໂລຢີໃໝ່ ໃຫ້ແກ່ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ແຕ່ຊາວບ້ານ ບໍ່ສາມາດໝູນໃຊ້ເທັກໂນໂລຍີອັນໃໝ່ດັ່ງກ່າວ ໃຫ້ເກີດປະໂຫຍດ ໃນການດໍາລົງຊີວິດ ຂອງຊາວບ້ານ ນອກຈາກການ ຈ້າງງານນໍາໂຄງການເຊົ່າ ແລະ ສໍາປະທານ ຫຼື ບໍລິສັດບໍ່ໄດ້ຖ່າຍທອດເຕັກໂນໂລຢີໃໝ່ ໃຫ້ແກ່ຊາວບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການເລີຍ* | | | *0* | |
| 4.8.3 ການພັດທະນາດ້ານສັງຄົມ | | x | | 1.04 |
| *4.8.3a ບໍລິສັດໄດ້ຕອບສະໜອງກິດຈະກໍາການພັດທະນາດ້ານສັງຄົມໃຫ້ແກ່ບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ຕາມການສະເໜີຂອງຊຸມຊົນ* | | | *1.04* | |
| *4.8.3b ບໍລິສັດໄດ້ຕອບສະໜອງກິດຈະກໍາການພັດທະນາດ້ານສັງຄົມໃຫ້ແກ່ບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການ ແຕ່ບໍ່ເປັນໄປຕາມການສະເໜີຂອງຊຸມຊົນ* | | | *0.52* | |
| *4.8.3c ບໍລິສັດບໍ່ໄດ້ສະໜອງກິດຈະກໍາການພັດທະນາດ້ານສັງຄົມໃຫ້ແກ່ບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການເລີຍ* | | | *0* | |